# ຂໍ້ຕົກລົງເລື້ອງບັນຊີຈຳກັດ ພາກ A ສຳລັບ ໂຄງການ CALFRESH

| ຊື່ກໍລະນີ | ເລກກໍລະນີ |
|---|---|
| ຊື່ພະນັກງານກຳກັບການຊ່ວຍເຫຼືອຂອງຄາວຕີ້ | ເລກພະນັກງານກຳກັບການຊ່ວຍເຫຼືອ |

## ອ່ານ ແລະລົງຊື່ຫຍໍ້ສຳລັບກົດລະບຽບແຕ່ລະຂໍ້ດັ່ງລຸ່ມນີ້:

| ຊື່ຫຍໍ້ | ຂ້າພະເຈົ້າເຂົ້າໃຈວ່າ: |
|---|---|
| | ທຶນຕ້ອງຖືກເກັບໄວ້ໃນສະຖາບັນການເງິນ, ເຊັ່ນ ທະນາຄານ, ເຄຣດິດຢູນ່ຽນ, ບັນຊີຝາກປະຢັດ ແລະເງິນກູ້, ອື່ນໆ, ແລະທຶນທັງໝົດໃນບັນຊີຈຳກັດຂອງຂ້າພະເຈົ້າຕ້ອງຖືກເກັບແຍກຕ່າງຫາກຈາກບັນຊີອື່ນໃດ. |
| | ຂ້າພະເຈົ້າຕ້ອງໃຫ້ຫຼັກຖານຂໍ້ມູນບັນຊີ. ບາງຕົວຢ່າງຂອງຂໍ້ມູນບັນຊີ ລວມມີ:<br>● ລາຍງານທະນາຄານ ຫຼື ໃບຮັບຈາກທະນາຄານ, ເຄຣດິດຢູນ່ຽນ ອື່ນໆ ຊຶ່ງສະແດງໃຫ້ເຫັນຊື່ ແລະທີ່ຢູ່ຂອງທະນາຄານ<br>● ຍອດຍັງເຫຼືອທັງໝົດໃນບັນຊີ ແລະກິດຈະກຳໃນບັນຊີ ນັບຕັ້ງແຕ່ວັນທີທີ່ທ່ານເຊັນຊື່ໃນຂໍ້ຕົກລົງເລື້ອງບັນຊີຈຳກັດ<br>● ຊື່ໃນບັນຊີ |
| | ຂ້າພະເຈົ້າເຂົ້າໃຈຕົວຢ່າງຫຼັກຖານບາງຢ່າງກ່ຽວກັບການໃຊ້ຈ່າຍທຶນທີ່ຂ້າພະເຈົ້າຖອນຈາກບັນຊີຈຳກັດ ຊຶ່ງລວມມີ ລາຍການດັ່ງຕໍ່ໄປນີ້:<br>● ເຊັກທີ່ຖືກຍົກເລີກ<br>● ລາຍງານທີ່ມີລາຍເຊັນຈາກຜູ້ຈັດຫາສິນຄ້າ ຫຼື ບໍລິການ ຊຶ່ງສະແດງເຖິງປະເພດ ແລະຈຳນວນການໃຊ້ຈ່າຍທີ່ໄດ້ຈ່າຍໄປ<br>● ໃບຮັບ |
| | ຂໍ້ຕົກລົງເລື້ອງບັນຊີຈຳກັດສະບັບນີ້ຈະຍຸດຕິລົງ:<br>● ເມື່ອຂ້າພະເຈົ້າບໍ່ໃຫ້ຫຼັກຖານແກ່ພະນັກງານກຳກັບການຊ່ວຍເຫຼືອກ່ຽວກັບບັນຊີຈຳກັດ<br>● ເມື່ອຄອບຄົວຂອງຂ້າພະເຈົ້າຖືກຍຸດຕິຈາກການຮັບຜົນປະໂຫຍດ CalFresh<br>● ເມື່ອບັນຊີຈຳກັດຖືກປິດລົງ<br>● ຖ້າຫາກ ກົດໝາຍວ່າດ້ວຍບັນຊີຈຳກັດມີການປ່ຽນແປງ |
| | ບໍ່ມີການຈຳກັດຈຳນວນເງິນສູງສຸດຂອງເງິນຝາກປະຢັດໃນບັນຊີຈຳກັດ. ຂ້າພະເຈົ້າສາມາດມີບັນຊີຈຳກັດໄດ້ຫຼາຍກວ່າໜຶ່ງບັນຊີ, ແລະທຶນໃນບັນຊີຈຳກັດທັງໝົດບໍ່ຖືກນັບໃສ່ຈຳນວນຈຳກັດຂອງຊັບສິນທີ່ກຳນົດໄວ້ຂອງຄອບຄົວ. |
| | ຖ້າຫາກ ຜົນປະໂຫຍດ CalFresh ຂອງຂ້າພະເຈົ້າຍຸດຕິລົງຍ້ອນເຫດຜົນໃດໆ, ແລະຖ້າຫາກ ຂ້າພະເຈົ້າຮ້ອງຂໍຮັບຜົນປະໂຫຍດ CalFresh ຄືນໃໝ່, ແລະມີການຢຸດຊະງັກໃນຜົນປະໂຫຍດ, ຍອດລວມຂອງຊັບສິນທີ່ນັບໄດ້ຂອງຂ້າພະເຈົ້າ, ລວມເຖິງເງິນໃດໆ ໃນບັນຊີຈຳກັດ, ບໍ່ສາມາດມີເກີນຈຳນວນຈຳກັດຂອງຊັບສິນທີ່ກຳນົດໄວ້ $2,000/$3,250. ຂ້າພະເຈົ້າເຂົ້າຮ່ວມຕົກລົງໃນຂໍ້ຕົກລົງເລື້ອງບັນຊີຈຳກັດສະບັບໃໝ່ໃນເວລາຮ້ອງຂໍເພື່ອເລີ້ມບັນຊີຈຳກັດໃໝ່. ຂໍ້ຕົກລົງເລື້ອງບັນຊີຈຳກັດແມ່ນຈຳເປັນ ຖ້າຫາກມີການຢຸດຊະງັກໃນການຊ່ວຍເຫຼືອ. |
| | ຖ້າຫາກ ທຶນຈາກບັນຊີຈຳກັດຂອງຂ້າພະເຈົ້າຖືກຖອນອອກ ແລະບໍ່ໄດ້ຖືກນຳໄປໃຊ້ຈ່າຍສຳລັບຄ່າໃຊ້ຈ່າຍທີ່ອະນຸຍາດໃຫ້, ເຖິງແມ່ນວ່າ ຂ້າພະເຈົ້າຈະມີຄ່າໃຊ້ຈ່າຍທີ່ເປັນເຫດສຸກເສີນກ່ຽວຂ້ອງກັບຄວາມເປັນຄວາມຕາຍກໍຕາມ, ຈຳນວນເງິນທີ່ຖອນອອກຈະຖືກນັບໃສ່ຈຳນວນຈຳກັດຂອງຊັບສິນທີ່ກຳນົດໄວ້ ແລະທາງຄາວຕີ້ຈະປະເມີນຊັບສິນທັງໝົດຄືນໃໝ່. |
| | ຄວາມຈຳເປັນທີ່ຈະຕ້ອງມີຊັບສິນໃນຈຳນວນໃກ້ຄຽງກັບຈຳນວນຈຳກັດຂອງຊັບສິນທີ່ກຳນົດໄວ້ $2,000 ຂອງຂ້າພະເຈົ້າ ($3,250 ຖ້າຫາກ ມີສະມາຊິກໃນຄົວເຮືອນຢ່າງໜ້ອຍໜຶ່ງຄົນທີ່ພິການ/ອາຍຸ 60 ປີຂຶ້ນໄປ) ສຳລັບເຫດສຸກເສີນຕ່າງໆ ຫຼື ຄ່າໃຊ້ຈ່າຍອື່ນໆ ກ່ອນທີ່ຂ້າພະເຈົ້າຈະເລີ້ມບັນຊີຈຳກັດ. |
| | ຖ້າຫາກ ຂ້າພະເຈົ້າລາຍງານການປ່ຽນແປງດ້ານລາຍໄດ້ແລະຄົວເຮືອນທຸກເຄິ່ງປີ ແລະຖອນເງິນໃນລະຫວ່າງຊ່ວງເຄິ່ງປີ, ຂ້າພະເຈົ້າຈຳເປັນຕ້ອງລາຍງານການຖອນເງິນໃນລາຍງານດ້ານລາຍໄດ້ໃນງວດຕໍ່ໄປ (SAR 7) ຫຼື ການຕໍ່ອາຍຸຜົນປະໂຫຍດຊຶ່ງຮອດເວລາທີ່ກຳນົດໄວ້. ຖ້າຫາກ ຂ້າພະເຈົ້າບໍ່ແມ່ນຄົວເຮືອນທີ່ຕ້ອງມີການລາຍງານທຸກເຄິ່ງປີ, ຂ້າພະເຈົ້າຕ້ອງລາຍງານການຖອນເງິນພາຍໃນ 10 ວັນ ນັບແຕ່ວັນຖອນເງິນອອກ. |
| | ດອກເບັ້ຍທີ່ໄດ້ຮັບໃນບັນຊີຈຳກັດຂອງຂ້າພະເຈົ້າຕ້ອງເອົາໄປຝາກເຂົ້າບັນຊີໂດຍກົງ. ຖ້າຫາກ ມີການສົ່ງດອກເບັ້ຍໃຫ້ຂ້າພະເຈົ້າ, ຂ້າພະເຈົ້າຕ້ອງເອົາໄປຝາກກັບຄືນໃສ່ບັນຊີຈຳກັດ. |
| | ເງິນທີ່ຝາກໄວ້ໃນບັນຊີຈຳກັດສາມາດເອົາໄປໃຊ້ຈ່າຍໄດ້ສະເພາະສຳລັບຄ່າໃຊ້ຈ່າຍທີ່ອະນຸຍາດໃຫ້ໂດຍກົງຊຶ່ງກ່ຽວກັບ:<br>● ການຊື້ເຮືອນເພື່ອຢູ່ອາໄສ<br>● ການເລີ້ມຕົ້ນທຸລະກິດໃໝ່<br>● ການສຶກສາ ຫຼື ການຝຶກອົບຮົມວຽກ ສຳລັບຜູ້ຖືບັນຊີ ແລະຜູ້ຢູ່ໃຕ້ການເບິ່ງແຍງຂອງເຂົາ/ລາວ |

## ການຢັ້ງຢືນ

ຂ້າພະເຈົ້າໄດ້ອ່ານເອກະສານຂໍ້ມູນແນະນຳແລ້ວ. ຂ້າພະເຈົ້າເຂົ້າໃຈກົດລະບຽບ ແລະຄວາມຮັບຜິດຊອບຂອງຂ້າພະເຈົ້າຕາມທີ່ລົງຊື່ຫຍໍ້ໄວ້ຂ້າງເທິງສຳລັບການເລີ້ມຕົ້ນ ແລະການເກັບຮັກສາບັນຊີຈຳກັດ, ແລະຄວາມຈຳເປັນໃນການມີຊັບສິນໃກ້ຄຽງກັບຈຳນວນຈຳກັດຂອງຊັບສິນທີ່ກຳນົດໄວ້ຈຳນວນ $2,000 ຂອງຂ້າພະເຈົ້າ ຫຼື $3,250 (ຖ້າຫາກ ມີສະມາຊິກໃນຄົວເຮືອນຢ່າງໜ້ອຍໜຶ່ງຄົນທີ່ພິການ ຫຼື ມີອາຍຸ 60 ປີຂຶ້ນໄປ) ສຳລັບເຫດສຸກເສີນຕ່າງໆ ຫຼື ຄ່າໃຊ້ຈ່າຍອື່ນໆ ກ່ອນຂ້າພະເຈົ້າເລີ້ມ**ບັນຊີຈຳກັດ**. ຂ້າພະເຈົ້າຈະຖາມພະນັກງານກຳກັບການຊ່ວຍເຫຼືອຂອງຂ້າພະເຈົ້າ ຖ້າຫາກ ຂ້າພະເຈົ້າບໍ່ແນ່ໃຈວ່າມີຄ່າໃຊ້ຈ່າຍຫຍັງແດ່ທີ່ອະນຸຍາດໃຫ້, ຫຼັກຖານຫຍັງແດ່ທີ່ຂ້າພະເຈົ້າຕ້ອງມີ, ຫຼື ເມື່ອໃດທີ່ຕ້ອງໃຫ້ຫຼັກຖານແກ່ທາງຄາວຕີ້.

| ລາຍເຊັນ ຫຼື ເຄື່ອງໝາຍຂອງຫົວໜ້າຄົວເຮືອນ ຫຼື ຕົວແທນທີ່ໄດ້ຮັບອະນຸຍາດ | ວັນທີ |
|---|---|
| ລາຍເຊັນ ຫຼື ເຄື່ອງໝາຍຂອງພະຍານ ແລະ/ຫຼື ນາຍພາສາ | ວັນທີ |